ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ກອງປະຊຸມຄະນະກຳມະການສົ່ງເສີມ ການເຂົ້າເຖິງການບໍລິການທາງດ້ານການເງິນອາຊຽນ




ກອງປະຊຸມຄະນະກຳມະການສົ່ງເສີມການເຂົ້າເຖິງການບໍລິການທາງດ້ານການເງິນອາຊຽນ ຄັ້ງທີ VIII (ASEAN Working Committee on FINC (WC-FINC) ໄດ້ຈັດຂຶ້ນໃນລະຫວ່າງວັນທີ 20-21 ສິງຫາ 2019 ທີ່ ນະຄອນຫຼວງວຽງຈັນ ໂດຍການໃຫ້ກຽດເຂົ້າຮ່ວມຂອງທ່ານນາງ ວັດທະນາ ດາລາລອຍ ຮອງຜູ້ວ່າການ ທະນາຄານແຫ່ງ ສປປ ລາວ (ທຫລ); ພ້ອມນີ້ ກໍ່ມີທ່ານນາງ Pia Bernadette Roman Tayag, ຮອງຫົວໜ້າກົມ, ທະນາຄານກາງ ປະເທດຟີລິປິນ ແລະ ທ່ານນາງ ປອ. Irene Yap TsueIng, ຮອງຫົວໜ້າກົມ, ທະນາຄານກາງ ບຣູໄນ ແລະ ມີພະນັກງານຈາກກະຊວງການເງິນ, ທະນາຄານກາງ ແລະ ຜູ້ກຳນົດນະໂຍບາຍທາງການເງິນຂອງ ອາຊຽນ, ກອງເລຂາອາຊຽນ ASEAN Secretariat (ASEC), ຄູ່ຮ່ວມພັດທະນາ ແລະອົງການຈັດຕັ້ງສາກົນ ກ່ຽວຂ້ອງ ເຂົ້າຮ່ວມ.

ກອງປະຊຸມຄັ້ງນີ້ ຍັງປຶກສາຫາລື ແລະລາຍງານຄວາມຄືບໜ້າການຈັດຕັ້ງປະຕິບັດແຜນງານການເຂົ້າເຖິງການ ບໍລິການທາງດ້ານການເງິນຂອງບັນດາປະເທດສະມາຊິກອາຊຽນ ລວມເຖິງການແລກປ່ຽນປະສົບການຮ່ວມກັນໃນ ຂົງເຂດອາຊຽນ ແລະ ໃນໂອກາດນີ້, ທ່ານຮອງຜູ້ວ່າການ ທຫລ ໄດ້ກ່າວວ່າ: ການເຂົ້າເຖິງການບໍລິການທາງດ້ານ ການເງິນແມ່ນປັດໄຈອັນສຳຄັນໃນການພັດທະນາເສດຖະກິດ-ສັງຄົມ. ນອກຈາກນັ້ນ, ວຽກງານດັ່ງກ່າວຍັງເປັນປັດ ໄຈສຳຄັນໃນການສົ່ງເສີມ 9 ໃນ 17 ເປົ້າໝາຍການພັດທະນາແບບຍືນຍົງ (Sustainable Development Goals:

SDGs) ໂດຍລັດຖະບານແຫ່ງ ສປປ ລາວ ໄດ້ກຳນົດ SDG 17+1 ໃຫ້ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມຂອງລາວ ແລະ ໄດ້ສ້າງແຜນງານການຮ່ວມມືລະຫວ່າງລັດຖະບານ ເພື່ອກຳນົດໜ້າວຽກໃນການວັດແທກຄວາມຄືບໜ້າໃນການບັນລຸເປົ້າໝາຍດັ່ງກ່າວ ແລະ ລັດຖະບານລາວໄດ້ມອບໝາຍໃຫ້ ທຫລ ຈັດຕັ້ງປະຕິບັດ SDG ຂໍ້ທີ 1, 8, 9, 10 ແລະ ທີ 17.




ນອກຈາກນີ້, ທຫລ ຍັງເປັນເຈົ້າການສ້າງແຜນດຳເນີນງານການເຂົ້າເຖິງການບໍລິການທາງດ້ານການເງິນຂອງ ສປປ ລາວ 2018-2025 ຊຶ່ງຄາດວ່າຈະຖືກຮັບຮອງໂດຍທ່ານຜູ້ວ່າການ ທຫລ ໃນໄຕມາດທີ 3 ນີ້ ແລະ ແຜນດຳເນີນງານສະບັບນີ້ ໄດ້ກຳນົດບັນດາໜ້າວຽກບູລິມະສິດທີ່ຈຳເປັນໃນການສົ່ງເສີມສະພາບແວດລ້ອມການເຂົ້າເຖິງການບໍລິການທາງດ້ານການເງິນໃນລາວ ໂດຍໄດ້ກຳນົດວິໄສທັດ ເພື່ອປັບປຸງຊີວິດການເປັນຢູ່ຂອງຄົວເຮືອນໃຫ້ດີຂຶ້ນ, ສົ່ງເສີມການຂະຫຍາຍຕົວຂອງເສດຖະກິດແຫ່ງຊາດ, ຫຼຸດຈຳນວນຜູ້ບໍ່ເຂົ້າເຖິງການບໍລິການທາງດ້ານການເງິນ ແລະ ເພີ່ມຄວາມເລິກເຊິ່ງໃນການເຂົ້າເຖິງການບໍລິການທາງດ້ານການເງິນ.

ຄະນະກຳມະການສົ່ງເສີມການເຂົ້າເຖິງການບໍລິການທາງດ້ານການເງິນອາຊຽນ ສ້າງຕັ້ງຂຶ້ນໃນກອງປະຊຸມລັດຖະມົນຕີກະຊວງການເງິນ ແລະຜູ້ວ່າການທະນາຄານກາງ ອາຊຽນໃນເດືອນ ເມສາ 2016 ທີ່ນະຄອນຫຼວງວຽງຈັນໂດຍມີເປົ້າໝາຍໃນການສົ່ງເສີມການລິເລີ່ມພັດທະນາການເຂົ້າເຖິງການບໍລິການທາງດ້ານການເງິນໃນອາຊຽນ ແລະແຜນງານຂອງຄະນະດັ່ງກ່າວ ໄດ້ຮັບການຮັບຮອງໃນປີ 2016 ໂດຍປະກອບມີ 4 ເປົ້າໝາຍສຳຄັນຄື:ຫຼຸດຈຳນວນການບໍ່ເຂົ້າເຖິງການບໍລິການທາງດ້ານການເງິນສະເລ່ຍຈາກ 44% ເປັນ 30%; ເພີ່ມລະດັບໂຄງລ່າງພື້ນຖານທາງດ້ານການເງິນຂອງອາຊຽນຈາກ 70% ເປັນ 85%; ເພີ່ມຊ່ອງທາງການເຂົ້າເຖິງການບໍລິການທາງດ້ານການເງິນ ແລະຄຸນນະພາບຂອງການບໍລິການໃຫ້ເທົ່າທຸກຂະແໜງການ; ສົ່ງເສີມການໃຫ້ຄວາມຮູ້ພື້ນຖານທາງດ້ານການເງິນ ແລະການປົກປ້ອງຜູ້ຊົມໃຊ້ທາງການເງິນ.

**# ຂ່າວ-ພາບ: ຣັດສະໝີ ດວງສັດຈະ**

# ຄົນລາວ ຮັກເມືອງລາວ ໃຊ້ເງິນກີບລາວ